ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

Lao

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

Lao Securities and Exchange Commission

ເລກທີ 021 /ຄລຕ

ນະຄອນຫຼວງວຽງຈັນ, ວັນທີ 05 JAN 2012

# ຂໍ້ຕົກລົງ

## ວ່າດ້ວຍການເພີ່ມສັດສ່ວນຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ໃນບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.
- ອີງຕາມຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ ສະບັບເລກທີ 012/ຄລຕ ລົງວັນທີ 19/05/2011.
- ອີງຕາມມະຕິກອງປະຊຸມ ຄລຕ ຄັ້ງທີ IX ລົງວັນທີ 14/07/2011.

**ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕົກລົງ ດັ່ງນີ້:**

**ມາດຕາ 1.** ອະນຸຍາດໃຫ້ ນັກລົງທຶນຕ່າງປະເທດ ລວມກັນທັງໝົດສາມາດຖືຄອງຮຸ້ນໃນບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ບໍ່ເກີນ 20% ຂອງຈຳນວນຮຸ້ນທັງໝົດ. ໃນນັ້ນ ນັກລົງທຶນຕ່າງປະເທດປະເພດບຸກຄົນ ສາມາດຖືຄອງໄດ້ ບໍ່ເກີນ 1% ແລະ ປະເພດສະຖາບັນ (ສະຖາບັນການເງິນ ແລະ ບໍ່ແມ່ນສະຖາບັນການເງິນ) ສາມາດຖືໄດ້ບໍ່ເກີນ 5% ຂອງຈຳນວນຮຸ້ນທັງໝົດ.

**ມາດຕາ 2.** ສຳນັກງານ ຄລຕ, ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ